ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 2162/ກຈພ

ນະຄອນຫຼວງວຽງຈັນ, ວັນທີ 21 SEP 2023

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງ ກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດຮອດປີ 2030

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຈັດຕັ້ງ ແລະ ພະນັກງານ, ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ຂໍ້ຕົກລົງ ຂອງກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ສະບັບເລກທີ 0200/ກປ, ລົງວັນທີ 28 ມັງກອນ 2022.

## ກົມຈັດຕັ້ງ ແລະ ພະນັກງານ ອອກຄຳແນະນຳ:

### I. ຈຸດປະສົງ

1. ເພື່ອແນະນຳ ການຮ່າງແຜນຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດຮອດປີ 2030;
2. ເພື່ອເປັນບ່ອນອີງໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ສູນ ແລະ ບັນດາວິທະຍາໄລ ແລະ ໂຮງຮຽນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ນະຄອນ ນຳໄປຜັນຂະຫຍາຍໃຫ້ເປັນໂຄງການຈັດຕັ້ງປະຕິບັດລະອຽດເປັນອັນສະເພາະຂອງຕົນ.

### II . ດ້ານໂຄງປະກອບ

ແຕ່ລະພາກສ່ວນຄົ້ນຄວ້າຜັນຂະຫຍາຍ ເປັນແຜນຈັດຕັ້ງປະຕິບັດເປັນອັນສະເພາະຂອງຕົນ ໂດຍເນື້ອໃນໃຫ້ປະກອບມີ 5 ຫົວຂໍ້ ດັ່ງນີ້:

1. ວິໄສທັດ;
2. ຍຸດທະສາດ/ເປົ້າໝາຍການພັດທະນາ;
3. ສະພາບການພັດທະນາຊັບພະຍາກອນມະນຸດປະຈຸບັນ;
4. ຈຸດປະສົງການພັດທະນາຊັບພະຍາກອນມະນຸດ;
5. ບັນດາໂຄງການ.

### III. ອະທິບາຍການຂຽນເນື້ອໃນ

1. **ວິໄສທັດ**: ເອົາເນື້ອໃນວິໄສທັດການພັດທະນາວຽກງານຂອງການຈັດຕັ້ງຕົນມາໃສ່;
2. **ຍຸດທະສາດ/ເປົ້າໝາຍການພັດທະນາ**: ເນື້ອໃນຂອງຫົວຂໍ້ນີ້ແມ່ນໃຫ້ສັງລວມເອົາຍຸດທະສາດ/ເປົ້າໝາຍການພັດທະນາຂອງວຽກງານຕາມໜ້າທີ່ການເມືອງຂອງຕົນ;

3. **ສະພາບການພັດທະນາຊັບພະຍາກອນມະນຸດປະຈຸບັນ**: ໃຫ້ອະທິບາຍດ້ານໂຄງປະກອບກົງຈັກການຈັດຕັ້ງ, ລາຍງານຈຳນວນພະນັກງານ-ລັດຖະກອນ, ສະຖິຕິລັດຖະກອນແຍກຕາມຊັ້ນວິຊາສະເພາະ, ສະຖິຕິລັດຖະກອນແຍກຕາມວິຊາສະເພາະ, ຕາມເກນອາຍຸ ແລະ ການກຳນົດຕຳແໜ່ງງານ;
4. **ຈຸດປະສົງການພັດທະນາຊັບພະຍາກອນມະນຸດ**: ກຳນົດຄວາມຕ້ອງການດ້ານທັກສະຂອງພະນັກງານແຕ່ລະລະດັບ, ວິຊາສະເພາະ, ຄວາມຊຳນານງານສະເພາະດ້ານ;
5. **ບັນດາໂຄງການ**: ແມ່ນໃຫ້ກຳນົດເປັນໂຄງການລະອຽດຂອງຂະແໜງການຕົນ ໂດຍໃຫ້ສອດຄ່ອງ ແລະ ສະໜັບສະໜູນແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້;

- ໂຄງຮ່າງແຜນຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຂອງກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດຮອດປີ 2030 ໄດ້ຄັດຕິດມາພ້ອມນີ້.

**ຫົວໜ້າກົມ**

ບຸນທະວີ ໄຊຍະເພັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມກອງ.......................                                                                                   ເລກທີ............/........

ນະຄອນຫຼວງວຽງຈັນ, ວັນທີ ......................

## ແຜນຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດຮອດປີ 2030 ຂອງກົມ.......................................................

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ.........................., ສະບັບເລກທີ ......../ກປ, ລົງວັນທີ.................
- ອີງຕາມ ຂໍ້ຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດຮອດປີ 2030 ສະບັບເລກທີ 0200/ກປ, ລົງວັນທີ 28 ມັງກອນ 2022;
- ອີງຕາມ.........................................................................................................................

1. ວິໄສທັດ

   ..........................................................................................................................

2. ຍຸດທະສາດ/ເປົ້າໝາຍການພັດທະນາ

   ..........................................................................................................................

3. ສະພາບການພັດທະນາຊັບພະຍາກອນມະນຸດປະຈຸບັນ

   ..........................................................................................................................

4. ຈຸດປະສົງການພັດທະນາຊັບພະຍາກອນມະນຸດ

   ..........................................................................................................................

5. ບັນດາໂຄງການ

   ໂຄງການທີ່ສະໜັບສະໜູນແຜນຍຸດທະສາດການພັດທະນາຊັບພະຍາກອນ ຂອງກະຊວງກະສິກຳ ແລະ ປ່າໄມ້ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030 ຂອງຂະແໜງການຕົນ. ຍຸດທະສາດ 1, 2 ແລະ 3 ຕາມ ຂໍ້ຕົກລົງ ສະບັບເລກທີ 0200/ກປ, ລົງວັນທີ 28 ມັງກອນ 2022 ມີ ຈຳນວນ .......... ໂຄງການດັ່ງນີ້:

   1) ໂຄງການ.......................................................................................................
   2) ໂຄງການ.......................................................................................................
   3) ...................................................................................................................

**ຫົວໜ້າ.................................**